ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້ ເລກທີ 2983/ກປ

ນະຄອນຫຼວງວຽງຈັນ, ວັນທີ 25 SEP 2014

# ຂໍ້ຕົກລົງ
## ຂອງລັດຖະມົນຕີ
## ວ່າດ້ວຍສະຫະກອນຜະລິດກະສິກຳ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີເລກທີ 136/ນຍ, ລົງວັນທີ 05 ມີນາ 2010 ວ່າດ້ວຍສະຫະກອນ;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີຂອງ ກົມສົ່ງເສີມກະສິກຳ ແລະສະຫະກອນ ເລກທີ 2971/ກສກສ, ລົງວັນທີ 19 ກັນຍາ 2014.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການໃນການຈັດຕັ້ງ ແລະການເຄື່ອນໄຫວ ຂອງສະຫະກອນຜະລິດກະສິກຳ ເພື່ອຊຸກຍູ້ສົ່ງເສີມການຜະລິດ ແລະການບໍລິການລວມໝູ່ດ້ານກະສິກຳ ໃຫ້ເຕີບໃຫຍ່ຂະຫຍາຍຕົວກາຍເປັນຂະບວນຜະລິດສິນຄ້າ ແລະສ້າງລາຍຮັບ ແນໃສ່ແກ້ໄຂຄວາມທຸກຍາກ ແລະຍົກລະດັບຊີວິດການເປັນຢູ່ຂອງຊາວກະສິກອນໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງຊາດ ໃຫ້ເຂັ້ມແຂງ.

### ມາດຕາ 2 ສະຫະກອນຜະລິດກະສິກຳ

ສະຫະກອນຜະລິດກະສິກຳ ຊຶ່ງຕໍ່ໄປນີ້ເອີ້ນວ່າ: "ສະຫະກອນ" ແມ່ນການຈັດຕັ້ງວິສາຫະກິດລວມໝູ່ຂອງຊາວກະສິກອນທີ່ສະໝັກໃຈສ້າງຕັ້ງຂຶ້ນ ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະກັນ ໃນການຜະລິດກະສິກຳເປັນສິນຄ້າພ້ອມທັງໃຫ້ການບໍລິການດ້ານການສະໜອງປັດໃຈການຜະລິດ, ສິນເຊື່ອ ແລະການຈຳໜ່າຍຜົນຜະລິດ, ລວມທັງການຮັບປະກັນທາງດ້ານສະຫວັດດີການສັງຄົມ ລະຫວ່າງສະມາຊິກ ແລະຄອບຄົວຂອງສະມາຊິກດ້ວຍກັນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຈົດທະບຽນ** ໝາຍເຖິງ ການຮັບຮອງກ່ຽວກັບການແຈ້ງຂຶ້ນທະບຽນສະຫະກອນຜະລິດດ້ານກະສິກຳຢ່າງຖືກຕ້ອງຕາມລະບຽບກົດໝາຍ; Ay

2. ຄະນະກຳມະການບໍລິຫານສະຫະກອນ ໝາຍເຖິງ ຄະນະບຸກຄົນທີ່ເປັນຕົວແທນຂອງສະມາຊິກສະຫະກອນ ຊຶ່ງໄດ້ຮັບການເລືອກຕັ້ງຈາກກອງປະຊຸມສະມາຊິກ ໃຫ້ດຳລົງຕຳແໜ່ງເປັນຄະນະບໍລິຫານງານ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ;

3. ພັນທະຂອງສະມາຊິກ ໝາຍເຖິງ ໜ້າທີ່ ແລະຄວາມຮັບຜິດຊອບສະມາຊິກທີ່ຈະຕ້ອງໄດ້ປະຕິບັດຕາມກົດລະບຽບຂອງສະຫະກອນ;

4. ຊາວກະສິກອນ ໝາຍເຖິງ ຜູ້ທີ່ເຮັດການຜະລິດກະສິກຳເປັນອາຊີບ ເຊັ່ນ: ປູກຝັງ, ລ້ຽງສັດ ແລະການປະມົງ;

5. ກຸ່ມຜູ້ຜະລິດກະສິກຳ ໝາຍເຖິງ ການຈັດຕັ້ງຂອງຊາວກະສິກອນຂະໜາດນ້ອຍ ທີ່ໄດ້ຜ່ານຂະບວນການກຸ່ມຮຽນຮູ້ມາແລ້ວ ພ້ອມກັນສະໝັກໃຈສ້າງຕັ້ງຂຶ້ນ ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະກັນໃນການວາງແຜນການຜະລິດ, ຊ່ວຍກັນຄ້ຳປະກັນແຫຼ່ງທຶນ, ຮ່ວມກັນຊື້ປັດໃຈການຜະລິດ, ການປຸງແຕ່ງ, ຮ່ວມກັນຂາຍຜົນຜະລິດ ແລະຊ່ວຍເຫຼືອກັນທາງດ້ານສະຫວັດດີການສັງຄົມລະຫວ່າງສະມາຊິກ ແລະຄອບຄົວຂອງສະມາຊິກດ້ວຍກັນ;

6. ການໃຫ້ບໍລິການສິນເຊື່ອ ໝາຍເຖິງ ການສົ່ງເສີມໃຫ້ສະມາຊິກສະຫະກອນຮູ້ຈັກການປະຢັດ, ຮູ້ຈັກອອມຊັບ ແລະສາມາດໃຫ້ບໍລິການເງິນກູ້ແກ່ສະມາຊິກນຳໄປໃຊ້ຈ່າຍເມື່ອມີຄວາມຈຳເປັນ ຫຼືນຳໄປເຮັດການຜະລິດ;

7. ການບໍລິຫານ ໝາຍເຖິງ ການຈັດຕັ້ງປະຕິບັດງານ ຂອງຄະນະບໍລິຫານງານສະຫະກອນ ດ້ວຍຄວາມໂປ່ງໃສ,ມີຄວາມຮັບຜິດຊອບສູງ ບົນພື້ນຖານຄວາມສະເໝີພາບ ແລະການເປີດໂອກາດໃຫ້ສະມາຊິກທຸກຄົນໄດ້ມີສ່ວນຮ່ວມ ໃນການກຳນົດນະໂຍບາຍຕ່າງໆ ທີ່ຕ້ອງໄດ້ມີການກວດສອບ;

8. ແຜນການດຳເນີນງານຂອງສະຫະກອນ ໝາຍເຖິງ ແຜນກິດຈະການທີ່ສະຫະກອນໄດ້ສ້າງຂຶ້ນ ເພື່ອຈັດຕັ້ງປະຕິບັດໃຫ້ບັນລຸຕາມຈຸດປະສົງ ແລະເປົ້າໝາຍຂອງຕົນ;

9. ດຳລັດວ່າດ້ວຍສະຫະກອນ ໝາຍເຖິງ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 136/ນຍ, ລົງວັນທີ 05 ມີນາ 2010 ວ່າດ້ວຍສະຫະກອນ.

**ມາດຕາ 4 ຫຼັກການ ແລະນະໂຍບາຍຂອງລັດ ຕໍ່ສະຫະກອນ**

ໃນການຈັດຕັ້ງ ແລະການເຄື່ອນໄຫວຂອງສະຫະກອນຜະລິດກະສິກຳ ໃຫ້ປະຕິບັດຕາມຫຼັກການພື້ນຖານຂອງສະຫະກອນ ທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງດຳລັດວ່າດ້ວຍສະຫະກອນ.

ສຳລັບນະໂຍບາຍສົ່ງເສີມຂອງລັດຕໍ່ສະຫະກອນຜະລິດກະສິກຳ ໃຫ້ປະຕິບັດຕາມມາດຕາ 5 ຂອງດຳລັດວ່າດ້ວຍສະຫະກອນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ກ່ຽວຂ້ອງກັບສະຫະກອນຜະລິດກະສິກຳ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງສະຫະກອນຜະລິດກະສິກຳ

**ມາດຕາ 6 ເງື່ອນໄຂການສ້າງຕັ້ງ**

ສະຫະກອນ ທີ່ຈະໄດ້ຮັບການສ້າງຕັ້ງຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນຊາວກະສິກອນ ທີ່ຖືສັນຊາດລາວ ຊຶ່ງໄດ້ຜ່ານຂະບວນການຮ່ວມກັນເປັນກຸ່ມຜູ້ຜະລິດ ແລະບໍລິການດ້ານກະສິກຳທີ່ໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນ ແລະມີຄວາມສະໝັກໃຈເຂົ້າເປັນສະຫະກອນ;

2. ມີຄະນະກຳມະການ ທີ່ເປັນຕົວແທນຂອງຜູ້ສະໝັກໃຈຢ່າງໜ້ອຍ ສາມ ຄົນ;

3. ມີກົດລະບຽບ, ແຜນດຳເນີນກິດຈະການ, ມີຫ້ອງການ, ມີທຶນ ແລະຊັບສິນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຂອງສະຫະກອນທີ່ໄດ້ກຳນົດໄວ້.

### ມາດຕາ 7 ການສະເໜີຂໍສ້າງຕັ້ງສະຫະກອນ

ພົນລະເມືອງລາວ ທີ່ມີຈຸດປະສົງສ້າງຕັ້ງສະຫະກອນ ຕ້ອງມີເງື່ອນໄຂຄົບຖ້ວນຕາມມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລະໄດ້ດໍາເນີນການຕາມຂັ້ນຕອນທີ່ລະບຸໄວ້ໃນມາດຕາ 7 ແລະ 8 ຂອງດໍາລັດວ່າດ້ວຍສະຫະກອນ ເພື່ອປະກອບເອກະສານຂໍສ້າງຕັ້ງນໍາຫ້ອງການກະສິກໍາ ແລະປ່າໄມ້ປະຈໍາເມືອງ ບ່ອນທີ່ຫ້ອງການສະຫະກອນຈະຕັ້ງຢູ່.

### ມາດຕາ 8 ການພິຈາລະນາສ້າງຕັ້ງສະຫະກອນ

ພາຍຫຼັງໄດ້ຮັບເອກະສານສະເໜີຂໍສ້າງຕັ້ງສະຫະກອນຜະລິດກະສິກໍາແລ້ວ ຫ້ອງການກະສິກໍາ ແລະປ່າໄມ້ປະຈໍາເມືອງ ຕ້ອງດໍາເນີນການຄົ້ນຄວ້າພິຈາລະນາ ກ່ຽວກັບການອອກໃບອະນຸຍາດສ້າງຕັ້ງສະຫະກອນຜະລິດກະສິກໍາຢ່າງຊ້າບໍ່ໃຫ້ເກີນ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດໃຫ້ໄດ້ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນໃຫ້ແກ່ຜູ້ສະເໜີຂໍສ້າງຕັ້ງສະຫະກອນຮັບຊາບ.

ໃບອະນຸຍາດສ້າງຕັ້ງສະຫະກອນຜະລິດກະສິກໍາ ມີກໍານົດໃຊ້ໄດ້ ສາມປີ, ກ່ອນໝົດກໍານົດສາມເດືອນ ສະຫະກອນທີ່ມີຈຸດປະສົງຢາກສືບຕໍ່ດໍາເນີນກິດຈະການ ທີ່ໄດ້ຮັບອະນຸມັດແລ້ວນັ້ນ ຕ້ອງສະເໜີຕໍ່ຫ້ອງການກະສິກໍາ ແລະປ່າໄມ້ປະຈໍາເມືອງ ເພື່ອພິຈາລະນາ.

### ມາດຕາ 9 ກົດລະບຽບ ແລະຊື່ຂອງສະຫະກອນ

ກົດລະບຽບຂອງສະຫະກອນ ຕ້ອງສອດຄ່ອງກັບມາດຕາ 9 ຂອງດໍາລັດວ່າດ້ວຍສະຫະກອນ.

ສະຫະກອນຜະລິດກະສິກໍາ ອາດມີຊື່ສະເພາະເຊັ່ນ: ສະຫະກອນປູກພືດ, ລ້ຽງສັດ, ການປະມົງ ແລະການບໍລິການ ແຕ່ຕ້ອງສອດຄ່ອງກັບມາດຕາ 10 ຂອງດໍາລັດວ່າດ້ວຍສະຫະກອນ.

### ມາດຕາ 10 ການຈົດທະບຽນ

ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງສະຫະກອນຜະລິດກະສິກໍາແລ້ວ ສະຫະກອນ ຕ້ອງປະກອບເອກະສານເພື່ອຍື່ນຄໍາຮ້ອງຂໍຈົດທະບຽນນໍາຫ້ອງການອຸດສາຫະກໍາ ແລະການຄ້າເມືອງ ແລະຈະມີຖານະນິຕິບຸກຄົນ ນັບແຕ່ວັນໄດ້ຮັບການຂຶ້ນທະບຽນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ແລະ 12 ຂອງດໍາລັດສະຫະກອນ.

## ໝວດທີ 3
## ສິດ ແລະໜ້າທີ່ຂອງສະຫະກອນແລະສະມາຊິກສະຫະກອນ

### ມາດຕາ 11 ສິດຂອງສະຫະກອນ

ສິດຂອງສະຫະກອນ ໃຫ້ປະຕິບັດຕາມມາດຕາ 13 ຂອງດໍາລັດວ່າດ້ວຍສະຫະກອນ.

### ມາດຕາ 12 ໜ້າທີ່ຂອງສະຫະກອນ

ນອກຈາກປະຕິບັດຕາມມາດຕາ 14 ຂອງດໍາລັດວ່າດ້ວຍສະຫະກອນແລ້ວ ຍັງມີໜ້າທີ່ຕ້ອງປະຕິບັດ ດັ່ງນີ້:

1. ເຄື່ອນໄຫວຕາມແນວທາງນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະລະບຽບຂອງສະຫະກອນ;
2. ສ້າງແຜນການເຄື່ອນໄຫວດໍາເນີນທຸລະກິດການຜະລິດ ແລະການບໍລິການຂອງສະຫະກອນ ປະຈໍາເດືອນ, ປະຈໍາງວດ ແລະປະຈໍາປີ;
3. ປັບປຸງສະຫະກອນໃຫ້ເຕີບໃຫຍ່ ແລະເຂັ້ມແຂງຢ່າງຕໍ່ເນື່ອງ;
4. ສ້າງໃຫ້ມີສະຫວັດດີການແກ່ສະມາຊິກ, ຄອບຄົວ ແລະສັງຄົມ;
5. ຈັດກອງປະຊຸມປະຈໍາງວດ, ປະຈໍາປີ ແລະກອງປະຊຸມເລືອກຕັ້ງຄະນະບໍລິຫານຂອງສະຫະກອນ;
6. ລາຍງານປະຈໍາປີ ໃຫ້ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນທີ່ສະຫະກອນດໍາເນີນການຢູ່ໄດ້ຮັບຊາບ;
7. ກໍລະນີ ມີການປ່ຽນແປງຄະນະກໍາມະການບໍລິຫານສະຫະກອນ ຕ້ອງລາຍງານເປັນລາຍລັກອັກສອນ 4

ໃຫ້ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງທີ່ຕັ້ງຢູ່ ຮັບຊາບພາຍໃນ ສິບ ວັນລັດຖະການ;

8. ກໍລະນີໄດ້ຮັບການກູ້ຢືມ ຫຼືໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກຕ່າງປະເທດ ຕ້ອງໄດ້ແຈ້ງໃຫ້ທະນາຄານແຫ່ງ ສປປ ລາວ ຮັບຊາບຕາມລະບຽບກົດໝາຍ.

### ມາດຕາ 13 ເງື່ອນໄຂການເຂົ້າເປັນສະມາຊິກ ແລະການສິ້ນສຸດການເປັນສະມາຊິກສະຫະກອນ

ບຸກຄົນທີ່ມີຈຸດປະສົງເຂົ້າເປັນສະມາຊິກສະຫະກອນ ຕ້ອງມີເງື່ອນໄຂຄົບຖ້ວນ ແລະປະຕິບັດຕາມມາດຕາ 15 ແລະ 16 ຂອງດຳລັດວ່າດ້ວຍສະຫະກອນ.

ສະມາຊິກສະຫະກອນຈະສິ້ນສຸດລົງ ຍ້ອນການເສຍຊີວິດ, ສະໝັກໃຈລາອອກ ຫຼືມີການລະເມີດກົດລະບຽບຂອງສະຫະກອນຢ່າງຮ້າຍແຮງ ແລະເຫດຜົນອື່ນໆ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 18 ຂອງດຳລັດວ່າດ້ວຍສະຫະກອນ.

### ມາດຕາ 14 ສິດ ແລະໜ້າທີ່ຂອງສະມາຊິກ

ນອກຈາກປະຕິບັດຕາມມາດຕາ 17 ຂອງດຳລັດວ່າດ້ວຍສະຫະກອນແລ້ວ ຍັງມີໜ້າທີ່ຕ້ອງປະຕິບັດ ດັ່ງນີ້:

1. ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດ ດ້ານວຽກງານກະສິກຳໃຫ້ໜັກແໜ້ນ;
2. ເຂົ້າຮ່ວມການຝຶກອົບຮົມຍົກລະດັບຄວາມຮູ້ ທາງດ້ານເຕັກນິກວິທະຍາການໃນການປູກ, ການລ້ຽງ ແລະການປຸງແຕ່ງ ໃຫ້ສູງຂຶ້ນເທື່ອລະກ້າວ;
3. ມີສິດສະເໜີຂໍ້ນະໂຍບາຍຕ່າງໆ ຕາມທີ່ລະບຸໄວ້ຢູ່ໃນກົດລະບຽບຂອງສະຫະກອນ.

## ໝວດທີ 4
## ໂຄງປະກອບຂອງສະຫະກອນ

### ມາດຕາ 15 ໂຄງປະກອບຂອງສະຫະກອນ

ໂຄງປະກອບຂອງສະຫະກອນ ປະກອບດ້ວຍ:

1. ກອງປະຊຸມຂອງສະຫະກອນ;
2. ຄະນະກຳມະການບໍລິຫານສະຫະກອນ;
3. ຄະນະກວດກາສະຫະກອນ;
4. ຜູ້ຈັດການສະຫະກອນ;
5. ນາຍບັນຊີສະຫະກອນ;
6. ພະນັກງານວິຊາການຈຳນວນໜຶ່ງ ຕາມຄວາມຈຳເປັນ.

### ມາດຕາ 16 ກອງປະຊຸມຂອງສະຫະກອນ

ກອງປະຊຸມຂອງສະຫະກອນ ແມ່ນການຈັດຕັ້ງສູງສຸດຂອງສະຫະກອນ ເຊິ່ງປະກອບດ້ວຍ: ກອງປະຊຸມສາມັນ ແລະກອງປະຊຸມວິສາມັນ. ກອງປະຊຸມສາມັນ ເປີດຂຶ້ນຢ່າງໜ້ອຍປີລະຄັ້ງ, ສ່ວນກອງປະຊຸມວິສາມັນ ຈະເປີດຂຶ້ນເມື່ອໃດກໍໄດ້ ແລະສາມາດນຳເອົາທຸກບັນຫາເຂົ້າມາພິຈາລະນາໄດ້ຫາກເຫັນວ່າຈຳເປັນ.

ສຳລັບການຮຽກປະຊຸມ, ຈຳນວນຜູ້ເຂົ້າ, ມະຕິກອງປະຊຸມ, ປະທານກອງປະຊຸມ ແລະສິດໜ້າທີ່ຂອງກອງປະຊຸມສາມັນ ແມ່ນໃຫ້ປະຕິບັດຕາມມາດຕາ 20, 21, 22, 23 ແລະ 24 ຂອງດຳລັດວ່າດ້ວຍສະຫະກອນ.

### ມາດຕາ 17 ຄະນະກຳມະການບໍລິຫານສະຫະກອນ

ຄະນະກຳມະການບໍລິຫານສະຫະກອນ ແມ່ນການຈັດຕັ້ງບຸກຄະລາກອນຂອງສະຫະກອນ ຊຶ່ງປະກອບດ້ວຍ: ປະທານ, ຮອງປະທານ ແລະກຳມະການຈຳນວນໜຶ່ງ ໂດຍມີການແບ່ງຄວາມຮັບຜິດຊອບພາຍໃນຢ່າງລະອຽດ. ຈຳ 4ч

ນວນຄະນະກຳມະການບໍລິຫານ ຕ້ອງແທດເໝາະກັບຈຳນວນສະມາຊິກ ແຕ່ບໍ່ໃຫ້ຫຼຸດ ສາມ ຄົນ ແລະບໍ່ເກີນ ເກົ້າ ຄົນ ໂດຍໃຫ້ເປັນຈຳນວນຄີກ.

ຄະນະກຳມະການບໍລິຫານສະຫະກອນ ມີອາຍຸການ ສາມ ປີ ແລະສາມາດຖືກເລືອກຕັ້ງໃໝ່ໄດ້ ຕາມການເຫັນດີຂອງສະມາຊິກ ແຕ່ບໍ່ໃຫ້ເກີນ ສາມ ສະໄໝຕິດຕໍ່ກັນ. ໃນກໍລະນີຕຳແໜ່ງຂອງຄະນະກຳມະການບໍລິຫານໃດໜຶ່ງຫວ່າງລົງ, ກອງປະຊຸມຄະນະກຳມະການບໍລິຫານ ມີສິດແຕ່ງຕັ້ງສະມາຊິກຜູ້ໃດໜຶ່ງ ປະຕິບັດໜ້າທີ່ແທນຈົນກວ່າຈະມີການເລືອກຕັ້ງຄະນະກຳມະການບໍລິຫານຊຸດໃໝ່.

ສຳລັບປະທານ ແລະຮອງປະທານຄະນະກຳມະການບໍລິຫານ, ຄຸນວຸດທິຂອງກຳມະການບໍລິການ, ກອງປະຊຸມຄະນະກຳມະການບໍລິຫານ, ການພົ້ນຈາກການເປັນກຳມະການບໍລິຫານ ແລະສິດໜ້າທີ່ຂອງຄະນະກຳມະການບໍລິຫານ ແມ່ນໃຫ້ປະຕິບັດຕາມມາດຕາ 27, 28, 29, 30, 31 ແລະ 34 ຂອງດຳລັດວ່າດ້ວຍສະຫະກອນ.

**ມາດຕາ 18 ຄະນະກວດກາສະຫະກອນ**

ຄະນະກວດກາສະຫະກອນ ແມ່ນຄະນະກວດສອບພາຍໃນຂອງສະຫະກອນ ຖືກແຕ່ງຕັ້ງ ແລະປົດຕຳແໜ່ງໂດຍກອງປະຊຸມສະໄໝສາມັນຂອງສະຫະກອນ ຊຶ່ງປະກອບດ້ວຍສະມາຊິກແຕ່ ສາມຄົນຂຶ້ນໄປ, ໃນນັ້ນ ໜຶ່ງຄົນຕ້ອງມີປະສົບການດ້ານບັນຊີ.

ສຳລັບສິດ ແລະໜ້າທີ່ຂອງຜູ້ກວດກາສະຫະກອນ ແມ່ນໃຫ້ປະຕິບັດຕາມມາດຕາ 33 ຂອງດຳລັດວ່າດ້ວຍສະຫະກອນ.

**ມາດຕາ 19 ຜູ້ຈັດການສະຫະກອນ**

ຜູ້ຈັດການສະຫະກອນ ແມ່ນຜູ້ບໍລິຫານວຽກງານປະຈຳວັນ ໃນຂອບເຂດສິດ ແລະໜ້າທີ່ຂອງຕົນ ຕາມທີ່ໄດ້ລະບຸໄວ້ໃນກົດລະບຽບພາຍໃນຂອງສະຫະກອນ ຊຶ່ງຖືກແຕ່ງຕັ້ງ ຫຼືປົດຕຳແໜ່ງໂດຍຄະນະກຳມະການບໍລິຫານສະຫະກອນ.

ສຳລັບສິດ ແລະໜ້າທີ່ຂອງຜູ້ຈັດການສະຫະກອນ ແມ່ນໃຫ້ປະຕິບັດຕາມມາດຕາ 32 ຂອງດຳລັດວ່າດ້ວຍສະຫະກອນ.

**ມາດຕາ 20 ນາຍບັນຊີສະຫະກອນ**

ນາຍບັນຊີສະຫະກອນ ແມ່ນບຸກຄົນທີ່ມີມາດຖານ ແລະໄດ້ຮັບການແຕ່ງຕັ້ງຈາກຄະນະກຳມະການບໍລິຫານສະຫະກອນ ໃຫ້ປະຕິບັດໜ້າທີ່ເປັນນາຍບັນຊີ. ສຳລັບ ສິດ ແລະໜ້າທີ່ຂອງນາຍບັນຊີ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການບັນຊີ.

**ມາດຕາ 21 ຄວາມຮັບຜິດຊອບຕໍ່ຜົນເສຍຫາຍ**

ຄະນະກຳມະການບໍລິຫານ, ຜູ້ຈັດການ, ຜູ້ກວດກາ, ນາຍບັນຊີ ແລະພະນັກງານວິຊາການຜູ້ທີ່ມີໜ້າທີ່ຄຸ້ມຄອງສະຫະກອນ ຕ້ອງໄດ້ຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດທີ່ເກີດຂຶ້ນຈາກການກະທຳຂອງຕົນເອງ ໃນກໍລະນີປະຕິບັດເກີນຂອບເຂດສິດ - ໜ້າທີ່ທີ່ໄດ້ຮັບມອບໝາຍ ຫຼືສໍ້ໂກງ ເພື່ອຜົນປະໂຫຍດຂອງຕົນເອງ ແລະໝູ່ຄະນະຕາມລະບຽບກົດໝາຍ.

## ໝວດທີ 5
## ການເງິນ, ການຄວບ, ການແຍກ ແລະການຍຸບເລີກສະຫະກອນ

**ມາດຕາ 22 ການເງິນສະຫະກອນ**

ທຶນ ຫຼືເງິນຂອງສະຫະກອນ ໄດ້ມາຈາກ: ທຶນຕົນເອງ, ທຶນກູ້ຢືມ ແລະທຶນຊ່ວຍເຫຼືອ ຫຼືສະໜັບສະໜູນໃນຮູບການຕ່າງໆ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ. Ak

ສໍາລັບການປະກອບທຶນຂອງສະມາຊິກ, ຜົນຕອບແທນ, ເງິນສ່ວນແບ່ງຈາກການດໍາເນີນທຸລະກິດຮ່ວມ, ຄັງສໍາຮອງ, ຄ່າທໍານຽມ, ເງິນຝາກ, ຄັງສະສົມ ເພື່ອການສຶກສາ ແລະການພັດທະນາສະຫະກອນ ແລະຊັບສົມບັດຫຼື ພື້ນຖານໂຄງລ່າງທີ່ລັດລົງທຶນໃຫ້ ແມ່ນໃຫ້ປະຕິບັດຕາມມາດຕາ 37, 38, 39, 40, 41, 42, 43 ແລະ 44 ຂອງດໍາລັດວ່າດ້ວຍສະຫະກອນ.

**ມາດຕາ 23 ການຄວບ, ການແຍກ ແລະຍຸບເລີກສະຫະກອນ**

ສະຫະກອນ ອາດຈະຄວບເຂົ້າກັນ, ແຍກເປັນຫຼາຍສະຫະກອນ ແລະຍຸບເລີກໄດ້ ຕາມການເຫັນດີເປັນເອກະສັນຂອງສະມາຊິກ ແລະເຈົ້າໜີ້ ກໍບໍ່ໄດ້ຄັດຄ້ານ.

ສໍາລັບ ຫຼັກການໃນການຄວບ, ການແຍກ ແລະການຍຸບເລີກ ແມ່ນໃຫ້ປະຕິບັດຕາມມາດຕາ 45, 46 ແລະ 47 ຂອງດໍາລັດວ່າດ້ວຍສະຫະກອນ.

## ໝວດທີ 6
## ການຄຸ້ມຄອງ ແລະການກວດກາສະຫະກອນ

**ມາດຕາ 24 ການຄຸ້ມຄອງສະຫະກອນ**

ກະຊວງກະສິກໍາ ແລະປ່າໄມ້ ເປັນຜູ້ຄຸ້ມຄອງສະຫະກອນຜະລິດກະສິກໍາຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການສາຍຕັ້ງຂອງຕົນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມສົ່ງເສີມກະສິກໍາ ແລະສະຫະກອນ;
2. ຂັ້ນແຂວງ ແມ່ນ ຂະແໜງສົ່ງເສີມກະສິກໍາ ແລະສະຫະກອນ;
3. ຂັ້ນເມືອງ ແມ່ນ ໜ່ວຍງານສົ່ງເສີມກະສິກໍາ ແລະສະຫະກອນ;
4. ຂັ້ນບ້ານ ແມ່ນ ໜ່ວຍງານກະສິກໍາ ແລະປ່າໄມ້ບ້ານ.

**ມາດຕາ 25 ສິດ ແລະໜ້າທີ່ຂອງກົມສົ່ງເສີມກະສິກໍາ ແລະສະຫະກອນ**

ໃນການຄຸ້ມຄອງສະຫະກອນຜະລິດກະສິກໍາ ກົມສົ່ງເສີມກະສິກໍາ ແລະສະຫະກອນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ ກະຊວງກະສິກໍາ ແລະປ່າໄມ້ ໃນການສົ່ງເສີມ, ພັດທະນາ ແລະຄຸ້ມຄອງສະຫະກອນຜະລິດກະສິກໍາ ແລະປ່າໄມ້ ຢ່າງລວມສູນ ແລະເປັນເອກະພາບໃນທົ່ວປະເທດ;
2. ຄົ້ນຄວ້າ ແລະຜັນຂະຫຍາຍນະໂຍບາຍ ແລະລະບຽບກົດໝາຍ ກ່ຽວກັບການສົ່ງເສີມພັດທະນາ ແລະຄຸ້ມຄອງສະຫະກອນ ແລ້ວນໍາສະເໜີຕໍ່ກະຊວງກະສິກໍາ ແລະປ່າໄມ້ ເພື່ອພິຈາລະນາຮັບຮອງ;
3. ໂຄສະນາເຜີຍແຜ່ ແລະສຶກສາອົບຮົມ ລະບຽບກົດໝາຍ ກ່ຽວກັບວຽກງານສະຫະກອນຢ່າງກວ້າງຂວາງ ແລະທົ່ວເຖິງ;
4. ກໍ່ສ້າງ, ຍົກລະດັບບຸກຄະລາກອນທີ່ຮັບຜິດຊອບວຽກງານສົ່ງເສີມ ແລະຄຸ້ມຄອງສະຫະກອນ ທາງດ້ານການເມືອງແນວຄິດ, ຄຸນສົມບັດ, ຈັນຍາບັນ ແລະວິຊາສະເພາະໃຫ້ໜັກແໜ້ນ;
5. ສ້າງຄູ່ມື ແລະສະໜອງການຝຶກອົບຮົມ ກ່ຽວກັບການຄຸ້ມຄອງ, ບໍລິຫານຈັດການ ແລະດໍາເນີນງານໃຫ້ແກ່ສະຫະກອນ;
6. ປະສານສົມທົບກັບບັນດາກົມ, ອົງການຈັດຕັ້ງທີ່ກ່ຽວຂ້ອງໃນພາກລັດ, ຜູ້ປະກອບກິດຈະການ ແລະອົງການຈັດຕັ້ງທາງສັງຄົມ ເພື່ອຊຸກຍູ້ສົ່ງເສີມການພັດທະນາສະຫະກອນ;
7. ຕິດຕາມຊຸກຍູ້, ແນະນໍາການຈັດຕັ້ງປະຕິບັດວຽກງານການສົ່ງເສີມ, ການຄຸ້ມຄອງ ແລະເອື້ອອໍານວຍໃນການກວດສອບສະຫະກອນຂອງບັນດາແຂວງ ແລະເມືອງ ໃນຂອບເຂດທົ່ວປະເທດ;
8. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະດໍາລັດວ່າດ້ວຍສະຫະກອນ.

**ມາດຕາ 26 ສິດ ແລະໜ້າທີ່ຂອງຂະແໜງສົ່ງເສີມກະສິກຳ ແລະສະຫະກອນ**

ໃນການຄຸ້ມຄອງສະຫະກອນຜະລິດກະສິກຳ ຂະແໜງສົ່ງເສີມກະສິກຳ ແລະສະຫະກອນມີສິດແລະໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ ກົມສົ່ງເສີມກະສິກຳ ແລະສະຫະກອນ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະພາກສ່ວນທີ່ກ່ຽວຂ້ອງ ໃນການຊຸກຍູ້ສົ່ງເສີມ, ຄຸ້ມຄອງ ແລະກວດກາສະຫະກອນ;
2. ຜັນຂະຫຍາຍ, ໂຄສະນາເຜີຍແຜ່ ແລະສຶກສາອົບຮົມລະບຽບກົດໝາຍ ກ່ຽວກັບການສົ່ງເສີມ, ຄຸ້ມຄອງ ແລະກວດກາສະຫະກອນ ພາຍໃນແຂວງ ແລະນະຄອນຫຼວງໃຫ້ທົ່ວເຖິງ;
3. ກໍ່ສ້າງ, ຍົກລະດັບບຸກຄະລາກອນທີ່ຮັບຜິດຊອບວຽກງານສົ່ງເສີມ, ຄຸ້ມຄອງ ແລະກວດກາສະຫະກອນ ທາງດ້ານການເມືອງແນວຄິດ, ຄຸນສົມບັດ, ຈັນຍາບັນ ແລະວິຊາສະເພາະໃຫ້ໜັກແໜ້ນ;
4. ສະໜອງການຝຶກອົບຮົມ ກ່ຽວກັບການຄຸ້ມຄອງ, ບໍລິຫານ ແລະດຳເນີນງານໃຫ້ແກ່ສະຫະກອນ;
5. ປະສານສົມທົບກັບບັນດາຂະແໜງການ, ອົງການຈັດຕັ້ງທີ່ກ່ຽວຂ້ອງໃນພາກລັດ, ຜູ້ປະກອບກິດຈະການ ແລະອົງການຈັດຕັ້ງທາງສັງຄົມ ເພື່ອຊຸກຍູ້ສົ່ງເສີມການພັດທະນາສະຫະກອນຢູ່ພາຍໃນແຂວງ;
6. ຕິດຕາມຊຸກຍູ້, ແນະນຳການຈັດຕັ້ງປະຕິບັດວຽກງານການສົ່ງເສີມ, ການຄຸ້ມຄອງ ແລະເອື້ອອຳນວຍການກວດສອບສະຫະກອນຂອງບັນດາເມືອງ;
7. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະດຳລັດວ່າດ້ວຍສະຫະກອນ.

**ມາດຕາ 27 ສິດ ແລະໜ້າທີ່ ຂອງໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນ**

ໃນການຄຸ້ມຄອງສະຫະກອນຜະລິດກະສິກຳ ໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ແລະເອື້ອອຳນວຍ ໃນການກວດກາສະຫະກອນຢູ່ພາຍໃນເມືອງຂອງຕົນ;
2. ຜັນຂະຫຍາຍ, ໂຄສະນາເຜີຍແຜ່ ແລະສຶກສາອົບຮົມລະບຽບກົດໝາຍ ກ່ຽວກັບການສົ່ງເສີມ, ການຄຸ້ມຄອງ ແລະກວດກາສະຫະກອນ ພາຍໃນເມືອງໃຫ້ທົ່ວເຖິງ;
3. ກໍ່ສ້າງ, ຍົກລະດັບຄວາມຮູ້ບຸກຄະລາກອນ ໃນແຕ່ລະຫົວໜ່ວຍສະຫະກອນ ກ່ຽວກັບການຄຸ້ມຄອງບໍລິຫານ ແລະການຈັດຕັ້ງປະຕິບັດກິດຈະການຂອງສະຫະກອນ ໃຫ້ມີມາດຕະຖານທີ່ໜັກແໜ້ນ;
4. ສະໜອງການຝຶກອົບຮົມກ່ຽວກັບການຜະລິດ, ການປຸງແຕ່ງ, ການສ້າງມູນຄ່າເພີ່ມ ແລະການຕະຫຼາດໃຫ້ແກ່ສະຫະກອນ;
5. ປະສານສົມທົບກັບບັນດາຂະແໜງການ, ອົງການຈັດຕັ້ງທີ່ກ່ຽວຂ້ອງໃນພາກລັດ, ຜູ້ປະກອບກິດຈະການ ແລະອົງການຈັດຕັ້ງທາງສັງຄົມ ເພື່ອຊຸກຍູ້ສົ່ງເສີມການພັດທະນາສະຫະກອນຢູ່ພາຍໃນເມືອງ;
6. ຕິດຕາມຊຸກຍູ້, ແນະນຳການຈັດຕັ້ງປະຕິບັດວຽກງານການສົ່ງເສີມ, ການຄຸ້ມຄອງ ແລະເອື້ອອຳນວຍໃນການກວດສອບສະຫະກອນ ຂອງບັນດາຫົວໜ່ວຍສະຫະກອນ ໃນຂອບເຂດທົ່ວເມືອງຢ່າງເປັນປົກກະຕິ;
7. ອະນຸມັດການສະເໜີຂໍສ້າງຕັ້ງສະຫະກອນ ແລະອອກໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະປ່າໄມ້ ຕາມມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;
8. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະດຳລັດວ່າດ້ວຍສະຫະກອນ.

**ມາດຕາ 28 ສິດ ແລະໜ້າທີ່ ຂອງໜ່ວຍງານກະສິກຳ ແລະປ່າໄມ້ບ້ານ**

ໃນການຄຸ້ມຄອງສະຫະກອນຜະລິດກະສິກຳ ໜ່ວຍງານກະສິກຳ ແລະປ່າໄມ້ບ້ານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ ແລະສຶກສາອົບຮົມລະບຽບກົດໝາຍ ກ່ຽວກັບວຽກງານສະຫະກອນ ໃຫ້ປະຊາຊົນພາຍໃນບ້ານຂອງຕົນໄດ້ຮັບຊາບ ແລະເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
2. ຊຸກຍູ້, ຕິດຕາມ ແລະກວດກາ ການເຄື່ອນໄຫວຂອງສະຫະກອນໃນຂອບເຂດບ້ານຂອງຕົນ ເພື່ອໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
3. ໃຫ້ຄວາມຮ່ວມມື ແລະອຳນວຍຄວາມສະດວກແກ່ການກວດກາສະຫະກອນທີ່ຕັ້ງຢູ່ພາຍໃນຂອບເຂດບ້ານຂອງຕົນ;

4. ລາຍງານສະພາບການເຄື່ອນໄຫວຂອງສະຫະກອນທີ່ຕັ້ງໃນຂອບເຂດບ້ານຂອງຕົນ ໃຫ້ການຈັດຕັ້ງຂັ້ນເທິງຊາບເປັນປົກກະຕິ;

5. ເຂົ້າຮ່ວມກອງປະຊຸມສະຫະກອນ ແລະປຶກສາຫາລື ແກ້ໄຂຂໍ້ຂັດແຍ່ງ ຕາມການຮຽກເຊີນຂອງຄະນະກໍາມະການບໍລິຫານສະຫະກອນ;

6. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະດໍາລັດວ່າດ້ວຍສະຫະກອນ.

## ມາດຕາ 29 ການກວດກາສະຫະກອນ

ການກວດກາສະຫະກອນ ແມ່ນການຕິດຕາມ, ກວດກາການຈັດຕັ້ງ ແລະການເຄື່ອນໄຫວຂອງສະຫະກອນຕາມຫຼັກການຂອງການກວດກາ ຊຶ່ງປະກອບດ້ວຍ:

1. ການກວດກາປົກກະຕິ ແມ່ນການກວດກາຕາມແຜນການ ສາມ ເດືອນ, ຫົກ ເດືອນ ແລະປະຈໍາປີ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການປົກກະຕິ ແຕ່ມີການແຈ້ງໃຫ້ເປົ້າໝາຍກວດກາຊາບລ່ວງໜ້າກ່ອນ ຢ່າງໜ້ອຍ ເຈັດ ວັນ;

3. ການກວດກາໃນກໍລະນີສຸກເສີນ ແມ່ນການກວດກາອັນຮີບດ່ວນ ແລະບໍ່ຢູ່ໃນແຜນການ.

ອົງການກວດກາສະຫະກອນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງສະຫະກອນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ຂອງຂໍ້ຕົກລົງສະບັບນີ້.

## ມາດຕາ 30 ເນື້ອໃນການກວດກາ

ການກວດກາສະຫະກອນ ປະກອບດ້ວຍ:

1. ກວດກາກໍາມະການບໍລິຫານ, ນາຍບັນຊີ, ຜູ້ຈັດການ ແລະພະນັກງານວິຊາການປະຕິບັດກົດລະບຽບ ແລະມະຕິຂອງສະມາຊິກສະຫະກອນ;

2. ກວດກາ, ຕິດຕາມການເຄື່ອນໄຫວວຽກງານດ້ານການເງິນ, ການບັນຊີ, ການນໍາໃຊ້ທຶນ ແລະຊັບສິນບັດຕ່າງໆຂອງສະຫະກອນ;

3. ກວດສອບການຮ່ວມມືຈາກສະມາຊິກ;

4. ການກວດສອບກິດຈະການຂອງສະຫະກອນ.

## ມາດຕາ 31 ການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງທີ່ເກີດຂຶ້ນກັບສະຫະກອນການຜະລິດກະສິກໍາ ເປັນຕົ້ນຂໍ້ຂັດແຍ່ງລະຫວ່າງສະມາຊິກ, ສະມາຊິກກັບການຈັດຕັ້ງ ແລະການຈັດຕັ້ງສະຫະກອນດ້ວຍກັນ ຫຼືກັບພາກສ່ວນອື່ນ ສາມາດດໍາເນີນການແກ້ໄຂດ້ວຍຮູບການ ດັ່ງນີ້:

1. ການໄກ່ເກ່ຍ ຫຼືການປະນີປະນອມກັນ;

2. ແກ້ໄຂທາງດ້ານບໍລິຫານໂດຍຂະແໜງການກະສິກໍາ ແລະປ່າໄມ້ ຊຶ່ງມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;

3. ແກ້ໄຂໂດຍຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ຮ້ອງຟ້ອງຕໍ່ສານປະຊາຊົນ.

# ໝວດທີ 7
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

## ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ແລະຕິດຕາມກວດກາຂະບວນການຜະລິດ ແລະການບໍລິການລວມໝູ່ດ້ານກະສິກໍາ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ຈະໄດ້ຮັບການຍ້ອງຍໍ

4. ລາຍງານສະພາບການເຄື່ອນໄຫວຂອງສະຫະກອນທີ່ຕັ້ງໃນຂອບເຂດບ້ານຂອງຕົນ ໃຫ້ການຈັດຕັ້ງຂັ້ນເທິງຊາບເປັນປົກກະຕິ;

5. ເຂົ້າຮ່ວມກອງປະຊຸມສະຫະກອນ ແລະປຶກສາຫາລື ແກ້ໄຂຂໍ້ຂັດແຍ່ງ ຕາມການຮຽກເຊີນຂອງຄະນະກຳມະການບໍລິຫານສະຫະກອນ;

6. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະດຳລັດວ່າດ້ວຍສະຫະກອນ.

## ມາດຕາ 29 ການກວດກາສະຫະກອນ

ການກວດກາສະຫະກອນ ແມ່ນການຕິດຕາມ, ກວດກາການຈັດຕັ້ງ ແລະການເຄື່ອນໄຫວຂອງສະຫະກອນ ຕາມຫຼັກການຂອງການກວດກາ ຊຶ່ງປະກອບດ້ວຍ:

1. ການກວດກາປົກກະຕິ ແມ່ນການກວດກາຕາມແຜນການ ສາມ ເດືອນ, ຫົກ ເດືອນ ແລະປະຈຳປີ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການປົກກະຕິ ແຕ່ມີການແຈ້ງໃຫ້ເປົ້າໝາຍກວດກາຊາບລ່ວງໜ້າກ່ອນ ຢ່າງໜ້ອຍ ເຈັດ ວັນ;

3. ການກວດກາໃນກໍລະນີສຸກເສີນ ແມ່ນການກວດກາອັນຮີບດ່ວນ ແລະບໍ່ຢູ່ໃນແຜນການ.

ອົງການກວດກາສະຫະກອນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງຂໍ້ຕົກລົງສະບັບນີ້.

## ມາດຕາ 30 ເນື້ອໃນການກວດກາ

ການກວດກາສະຫະກອນ ປະກອບດ້ວຍ:

1. ກວດກາກຳມະການບໍລິຫານ, ນາຍບັນຊີ, ຜູ້ຈັດການ ແລະພະນັກງານວິຊາການປະຕິບັດກົດລະບຽບ ແລະມະຕິຂອງສະມາຊິກສະຫະກອນ;

2. ກວດກາ, ຕິດຕາມການເຄື່ອນໄຫວວຽກງານດ້ານການເງິນ, ການບັນຊີ, ການນຳໃຊ້ທຶນ ແລະຊັບສິນບັດຕ່າງໆຂອງສະຫະກອນ;

3. ກວດສອບການຮ່ວມມືຈາກສະມາຊິກ;

4. ການກວດສອບກິດຈະການຂອງສະຫະກອນ.

## ມາດຕາ 31 ການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງທີ່ເກີດຂຶ້ນກັບສະຫະກອນການຜະລິດກະສິກຳ ເປັນຕົ້ນຂໍ້ຂັດແຍ່ງລະຫວ່າງສະມາຊິກ, ສະມາຊິກກັບການຈັດຕັ້ງ ແລະການຈັດຕັ້ງສະຫະກອນດ້ວຍກັນ ຫຼືກັບພາກສ່ວນອື່ນ ສາມາດດຳເນີນການແກ້ໄຂດ້ວຍຮູບການ ດັ່ງນີ້:

1. ການໄກ່ເກ່ຍ ຫຼືການປະນີປະນອມກັນ;

2. ແກ້ໄຂທາງດ້ານບໍລິຫານໂດຍຂະແໜງການກະສິກຳ ແລະປ່າໄມ້ ຊຶ່ງມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;

3. ແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ຮ້ອງຟ້ອງຕໍ່ສານປະຊາຊົນ.

# ໝວດທີ 7
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

## ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ແລະຕິດຕາມກວດກາຂະບວນການຜະລິດ ແລະການບໍລິການລວມໝູ່ດ້ານກະສິກຳ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ຈະໄດ້ຮັບການຍ້ອງຍໍ ຈຸ

ແລະປະຕິບັດນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝແລະລົງໂທດຕາມກໍລະນີໜັກ ຫຼືເບົາຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 34 ກາປະທັບ**

ສະຫະກອນຜະລິດກະສິກຳ ມີກາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານ ຕາມພາລະບົດບາດ, ສິດ ແລະໜ້າທີ່ ທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍສະຫະກອນ ແລະຂໍ້ຕົກລົງສະບັບນີ້.

**ມາດຕາ 35 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມສົ່ງເສີມກະສິກຳ ແລະສະຫະກອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ເປັນບົດແນະນຳ, ປຶ້ມຄູ່ມື ຢ່າງລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

ສຳລັບບັນດາສະຫະກອນຜະລິດກະສິກຳທີ່ໄດ້ສ້າງຕັ້ງ ແລະເຄື່ອນໄຫວມາກ່ອນນັ້ນ ໃຫ້ປະກອບເອກະສານ ສະເໜີຂໍສ້າງຕັ້ງສະຫະກອນນຳຫ້ອງການກະສິກຳ ແລະປ່າໄມ້ເມືອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 36 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດານິຕິກຳຂອງກະຊວງກະສິກຳ ແລະປ່າໄມ້ ທີ່ອອກກ່ອນນັ້ນ ຫາກມີເນື້ອໃນຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ວິໄລວັນ ພົມເຂ